**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

******************

ກະຊວງສຶກສາທິການ ແລະ ກິລາ

ສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານ ການສຶກສາ ແລະ ກິລາ          ເລກທີ 3002 ສຕຂສ.ສມ

ນະຄອນຫຼວງວຽງຈັນ, ວັນທີ 28 ສິງຫາ 2017

ບົດບັນທຶກກອງປະຊຸມ

ສະຫຼຸບ, ຖອດຖອນບົດຮຽນ ແລະ ປະເມີນຜົນ ການຈັດຕັ້ງການຮຽນ ການສອນ ແບບເອເລັກໂຕຣນິກ

ທີ່ ແຂວງສະຫວັນນະເຂດ ລະຫວ່າງວັນທີ 14-18/8/2017

ສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານ ການສຶກສາ ແລະ ກິລາ, ກົມສາມັນສຶກສາ ແລະ ສວສ ໄດ້ຮ່ວມກັນຈັດກອງປະຊຸມສະຫຼຸບ, ຖອດຖອນບົດຮຽນ ແລະ ປະເມີນຜົນ ການຈັດຕັ້ງການຮຽນ ການສອນ ແບບເອເລັກໂຕຣນິກ ປະຈຳປີຂຶ້ນ ທີ່ ສູນໄອຊີທີ ແຂວງສະຫວັນນະເຂດ ໂດຍມີການເຂົ້າຮ່ວມ ຂອງຜູ້ອຳນວຍການສູນໄອຊີທີ, ຜູ້ອຳນວຍໂຮງຮຽນ ມສ ທີ່ສູນໄອຊີທີຕັ້ງຢູ່ ຈາກນະຄອນຫຼວງວຽງ ຈັນ ແລະ ແຂວງໃນທົ່ວປະເທດ.

ກອງປະຊຸມໄດ້ຮັບຟັງການສະຫຼຸບລວມການຈັດຕັ້ງປະຕິບັດການຮຽນ-ການສອນແບບເອເລັກໂຕຣນິກໃນໄລຍະຜ່ານ ແລະ ທິດທາງໃນຕໍ່ໜ້າ ເຊັ່ນ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງຂອງລັດຖະມົນຕີ ສະບັບເລກທີ 3780/ສຕຂສ.ສສກ ລົງວັນທີ 02 ກັນຍາ 2014. ສູນ ICT, ກົມມັດທະຍົມສຶກສາ, ສວສ, ຄູຝຶກ ແລະ ພາກສ່ວນກ່ຽວຂ້ອງໄດ້ຕົກລົງກັນເຮັດການທົດລອງການຮຽນ-ການສອນແບບເອເລັກໂຕຣນິກຜ່ານລະບົບ Video Conference ຊັ້ນ ມ5 ໃນ 3 ແຂວງ ຫຼວງພະບາງ, ນະຄອນຫຼວງ, ຈຳປາສັກ ເຊິ່ງໃຫ້ສູນ ICT ນະຄອນຫຼວງເປັນ ຕົ້ນທາງ ແລະ 2 ແຂວງທີ່ເຫຼືອເປັນປາຍທາງເຮັດການທົດລອງເລີ່ມແຕ່ ເດືອນເມສາ ຈົນຮອດປິດພາກຮຽນທີ 2 ເປັນໄລຍະເວລາ ສອງເດືອນປາຍ, ໄດ້ລາຍງານຕໍ່ຄະນະນຳກະຊວງ ແລະ ຈັດຕັ້ງການຮຽນການສອນ ແບບເອເລັກໂຕຣນິກ ໃນສົກຮຽນ 2014-15 ເຊິ່ງເລີ່ມຕົ້ນແຕ່ ມ5 ຈຳນວນ 2 ຫ້ອງ (ຫ້ອງລະ 26 ຄົນ) ຮຽນ-ສອນເຕັມເວລາໃນ ສູນ ICT, ທຸກວິຊາ ຕາມຫຼັກສູດໃໝ່ ມ5, ສຳແຂວງ ທີ່ມີການເຊື່ອມຕໍ່ເຄືອຂ່າຍ ແມ່ນ ນຳໃຊ້ຮູບແບບ ສອນຜ່ານລະບົບ Video Conference real time, ສຳລັບ 6 ວິຊາ: ຄະນິດສາດ, ຟີຊິກ, ເຄມີ, ຊີວະສາດ, ພາສາອັງກິດ ແລະ ວິຊາ IT, ສຳລັບແຂວງທີ່ຍັງບໍ່ທັນໄດ້ເຊື່ອມຕໍ່ເຄືອຂ່າຍ ແມ່ນ ນຳໃຊ້ຮູບແບບອອບລາຍ (Off-line). ແລະ ສາມາດສະຫຼຸບໄດ້ດັ່ງລຸ່ມນີ້:

1. ຜູ້ບໍລິຫານ, ພະນັກງານເຕັກນິກວິຊາການ, ຄູຝຶກ ແລະ ຄູ-ອາຈານທີ່ຮ່ວມໂຄງການດັ່ງກ່າວໄດ້ໄປທັດສະນະສຶກສາ ແລະ ຝຶກອົບຮົມຕາມຫົວຂໍ້ຕ່າງໆລວມທັງໝົດ 650 ເທື່ອຄົນ;
2. ພະນັກງານວິຊາການໄປຍົກລະດັບໄລຍະຍາວ ລະດັບປະລິນຍາໂທ 4 ຄົນ ທີ່ ລາຊະອາຈັກໄທ
3. ໄດ້ອັບເດດປື້ມແບບຮຽນ ແລະ ປື້ມຄູ່ມື ແຕ່ປ 1-ມ7 ຂຶ້ນລະບົບລາວເລີນ ຈຳນວນ 234 ຫົວ
4. ໄດ້ພັດທະນາເນື້ອໃນບົດສອນແບບເອເລັກໂຕຣນິກ ແລະ ວີດີໂອ ສຳລັບຊັ້ນ ມ5, 6 ແລະ 7 ຂຶ້ນລະບົບລາວເລີນ;
5. ຜົນການຮຽນຂອງນັກຮຽນ:

- ຊັ້ນມ 5 ຈຳນວນທັງໝົດ 921 ຄົນ, ເສັງໄດ້ 100%
- ຊັ້ນມ 6 ຈຳນວນທັງໝົດ 818 ຄົນ, ເສັງໄດ້ 100%
- ຊັ້ນມ 7 ຈຳນວນທັງໝົດ 865 ຄົນ, ຄົນເສັງຕົກ 1 ແລະ ບໍ່ໄດ້ເສັງ 1
- ນັກຮຽນຊັ້ນ ມ7 ທີ່ຮຽນຢູ່ສູນໄອຊີທີແຂວງວຽງຈັນ ເສັງໄດ້ອັນທີ 3 ລະດັດຊາດ ວິຊາຟີກສິກ
- ນັກຮຽນ ທີ່ຮຽນຢູ່ສູນໄອຊີທີ ແຂວງຈຳປາສັກ+ສະຫວັນນະເຂດ+ນະຄອນຫຼວງ ສາມາດຍາດໄດ້ລະດັບທີ 1 ລະດັບຊາດ ໃນການຕອບຄຳຖາມ ວິທະສາດກ່ຽວກັບອາຊຽນ

ຜ່ານການຄົ້ນຄ້ວາ, ປຶກສາຫາລື ແລະ ແລກປ່ຽນປະກອບຄຳເຫັນຕໍ່ການຈັດຕັ້ງປະຕິບັດໃນໄລຍະຜ່ານມາ 3 ສົກຮຽນ ກອງປະຊຸມ ຊຶ່ງມີຄວາມເປັນເອກະພາບກັນທາງດ້ານວິຊາ ການເພື່ອຈັດຕັ້ງປະຕິບັດການຮຽນ ການສອນ ແບບເອເລັກໂຕຣນິກ ໃນຕໍ່ໜ້າດັ່ງນີ້:

1. ເຫັນດີໃຫ້ສືບຕໍ່ຈັດຕັ້ງປະຕິບັດວຽກງານການຮຽນ-ການສອນແບບເອເລັກໂຕຣນິກສຳລັບຊັ້ນມັດທະຍົມສຶກສາຕອນປາຍ;
2. ການຈັດຕັ້ງປະຕິບັດແມ່ນໃຫ້ປະຕິບັດຕາມ ແຈ້ງການສະບັບເລກທີ 3264/ຫກ.ມຍ ລົງວັນທີ 26/8/2014 ເພາະເຫັນຍັງມີຄວາມເໝາະສົມ;
3. ນັກຮຽນທີ່ຮຽນຢູ່ສູນໄອຊີທີ ແມ່ນເປັນນັກຮຽນຂອງໂຮງຮຽນທີ່ສູນໄອຊີທີຕັ້ງຢູ່ ທາງດ້ານວິຊາການແມ່ນຂຶ້ນກັບໂຮງຮຽນໂດຍກົງ, ນັກຮຽນຕ້ອງມາຮຽນສູນໄອຊີທີບໍ່ອະນຸມຍາດໃຫ້ໄປຮຽນຢູ່ຫ້ອງຮຽນປົກກະຕິ ຂອງໂຮງຮຽນ;
4. ສຳລັບຕາຕະລາງຮຽນແມ່ນໃຫ້ເປັນເອກະພາບອັນດຽວກັນໂດຍຖືເອົາສູນຕົ້ນທາງເປັນຫຼັກ, ແຕ່ເວລາເຂົ້າຮຽນສຳລັບຫ້ອງຮຽນຢູ່ສູນໄອຊີທີໃນແຕ່ລະແຂວງແມ່ນໃຫ້ເຂົ້າຕາມປົກກະຕິ ແຕ່ໃຫ້ຈັດສັນເວລາສະເພາະຊົ່ວໂມງອອນລາຍໃຫ້ຕົງກັນ;
5. ສຳລັບຄູທີ່ຖືກແຕ່ງຕັ້ງ ແລະ ມອບໝາຍໃຫ້ເປັນຄູສອນຕົ້ນທາງຕ້ອງໄດ້ຕ້ອງໄດ້ພັດທະນາສື່ການຮຽນ-ການສອນຂອງຕົນເອງໃຫ້ສຳເລັດແລ້ວເອົາລົງໃນລະບົບເພື່ອໃຫ້ນັກຮຽນສາມາດເບິ່ງໄດ້ກ່ອນຊົ່ວໂມງຮຽນ;
6. ເນື່ອງຈາກຄູທີ່ຖືກແຕ່ງຕັ້ງ ແລະ ມອບໝາຍໃຫ້ເປັນຄູສອນຕົ້ນທາງແມ່ນໄດ້ເຮັດວຽກເພີ່ມຂຶ້ນຫລາຍໃນການພັດທະນາເນື້ອໃນບົດສອນແບບເອເລັກໂຕຣນິກ ສະເໜີໃຫ້ກົມສາມັນສຶກສາຄົ້ນຄວ້າພິຈາລະນາໂມງສອນ ບໍ່ໃຫ້ກາຍ 10 ຊົ່ວໂມງ/ອາທິດ;
7. ເພື່ອຮັບປະກັນທາງດ້ານເນື້ອໃນ ແລະ ຄວາມຖືກຕ້ອງຄູທີ່ພັດທະນາບົດສອນແລ້ວກ່ອນຈະເອົາລົງໃນລະບົບແມ່ນຕ້ອງໄດ້ມາຜ່ານ ສວສ ກ່ອນ;
8. ລະບົບຮັບໃຊ້ການຮຽນ-ການສອນ (LaoLearn) ທີ່ພັດທະນາແລ້ວນັ້ນຍັງບໍ່ສາມາດຕອບສະໜອງໄດ້ຕາມຄວາມຮຽກ ຮ້ອງຕ້ອງການຕົວຈິງເທົ່າທີ່ຄວນ ສະເໜີໃຫ້ ສູນໄອຊີທີ ສົມທົບກັບພາກສ່ວນທີ່ ກ່ຽວຂ້ອງສືບຕໍ່ພັດທະນາ, ປັບປຸງໃຫ້ທັນສະໃໝ;
9. ຖ້າແຂວງໃດຈັດຕັ້ງປະຕິບັດການຮຽນ-ການສອນແບບເອເລັກໂຕຣນິກ ທີ່ບໍ່ໄປຕາມແຈ້ງຂອງກະຊວງແມ່ນໃຫ້ລາຍງານລະອຽດໄປຍັງກະຊວງໂດຍຜ່ານພະແນກ ສສຂ ກ່ອນ ແລະ ບໍ່ເຫັນດີໃຫ້ຈັດຕັ້ງປະຕິບັດກ່ອນຈຶ່ງລາຍງານ;
10. ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການຮຽນ-ການສອນແບບເອເລັກໂຕຣນິກໃຫ້ໄປຕາມຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້ ສະເໜີໃຫ້ ສູນໄອຊີທີ, ກົມສາມັນສຶກສາ ແລະ ສວສ ລົງຕິດຕາມຊຸກຍູ້ເປັນປົກກະຕິ;
11. ເພີ່ມທະວີຂອດການປະສານລະຫວ່າງ ກະຊວງ, ແຂວງ, ໂຮງຮຽນ ແລະ ສູນໄອຊີທີ

| | |
|---|---|
| ປະທານກອງປະຊຸມ<br>ກົມສາມັນສຶກສາ | ຜູ້ບັນທຶກ<br>ສູນໄອຊີທີ |
| ບັນຈິງ ລັດທະວັນ | ພູວົງ ອະໄພ |